ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດພິທີປາຖະກະຖາເນື່ອງໃນໂອກາດ ວັນສ້າງຕັ້ງກຳມະບານລາວ ຄົບຮອບ 62 ປີ



ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາວັນສ້າງຕັ້ງສະຫະພັນກຳມະບານລາວຄົບຮອບ 62 ປີ (01 ກຸມພາ 1956 – 01 ກຸມພາ 2018) ຂຶ້ນໃນວັນທີ 24 ກຸມພາ 2018 ຢູ່ທີ່ສະໂມສອນໃຫຍ່ສະຖາບັນທະນາຄານແຫ່ງ ສປປ ລາວ, ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ຮອງຜູ້ວ່າການ ທຫລ, ຜູ້ຊີ້ນຳວຽກງານກຳມະບານ ທຫລ ພ້ອມດ້ວຍບັນດາຄະນະກົມພາຍໃນ ທຫລ, ສະມາຊິກສະຫະພັນກຳມະບານຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງິາ, ຄະນະພັກ, ປະທານສະຫະພັນກຳມະບານ ທຫລ ໄດ້ຂຶ້ນອ່ານລາຍງານຫຍໍ້ກ່ຽວກັບການເຄື່ອນໄຫວຂອງສະຫະພັນກຳມະບານ ທຫລ ປະຈຳປີ 2017 ແລະ ແຜນການປີ 2018 ໃນ

ດ້ານຕ່າງໆຄື: ວຽກງານດ້ານການເມືອງແນວຄິດ, ວຽກງານດ້ານການຈັດຕັ້ງ-ກໍ່ສ້າງ ແລະ ຂະຫຍາຍສະມາຊິກ, ດ້ານວຽກງານວິຊາສະເພາະ, ການຈັດຕັ້ງຂະບວນການ, ການພົວພັນຕ່າງປະເທດ, ວຽກງານດ້ານການເງິນ ແລະ ການກວດກາ. ໂດຍໃນໜຶ່ງປີທີ່ຜ່ານມາສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ສາມາດຂະຫຍາຍສະມາຊິກກຳມະບານໄດ້ 98 ສະຫາຍ, ຍິງ 52 ສະຫາຍ ເຮັດໃຫ້ສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ໃນສະໄໝທີ VII ມີຄະນະບໍລິຫານງານທັງໝົດ 15 ສະຫາຍ, ຍິງ 04 ສະຫາຍ, ມີກຳມະບານຮາກຖານທີ່ຂຶ້ນກັບທັງໝົດ 08 ຮາກຖານ, ປັດຈຸບັນມີສະມາຊິກກຳມະບານທັງໝົດ 2.604 ສະຫາຍ, ຍິງ 1.371 ສະຫາຍ ຄຽງຄູ່ໄປກັບການປັບປຸງໃຫ້ເຂັ້ມແຂງທາງດ້ານຄຸນນະພາບ ແລະ ເປັນເຈົ້າການຂະຫຍາຍການຈັດຕັ້ງໄປສູ່ຂົງເຂດທະນາຄານທຸລະກິດເອກະຊົນຕື່ມອີກ.




ຫຼັງຈາກນັ້ນ, ສະຫາຍ ສອນໄຊ ສິດພະໄຊ ໄດ້ໃຫ້ກຽດກ່າວປາຖະກະຖາ ໂດຍໄດ້ກ່າວເຖິງມູນເຊື້ອແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກຳມະບານລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 01 ກຸມພາ 1956 ຢູ່ເຂດທີ່ໝັ້ນແຂວງຫົວພັນ ເພື່ອໂຄສະນາ ຂົນຂວາຍ ເຕົ້າໂຮມກຳມະກອນ ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ໄດ້ສຶກສາອົບຮົມໃຫ້ມີຄວາມຕື່ນໂຕປະຕິວັດ, ມີນ້ຳໃຈຮັກຊາດ ແລະ ມີທັດສະນະຫຼັກໝັ້ນຊື່ນຊົມ, ມີແບບແຜນໃນການອອກແຮງງານ, ເປັນພົນລະເມືອງດີ, ມີວຽກເຮັດງານທຳ ແລະ ເປັນໂຕແທນໃຫ້ແກ່ການປົກປ້ອງສິດຜົນປະໂຫຍດອັນຊອບທຳແກ່ກຳມະກອນຊາວຜູ້ອອກແຮງງານລາວບັນດາເຜົ່າ, ສະຫະພັນກຳມະບານລາວ ທີ່ເປັນອົງການຕາງໜ້າໃຫ້ແກ່ຊົນຊັ້ນກຳມະກອນ ຊາວຜູ້ອອກແຮງງານ ໄດ້ຕັ້ງໜ້າປະກອບສ່ວນເຂົ້າໃນພາລະກິດປົກປັກ

ຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນໃນໄລຍະປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການຂອງພັກ.

ນອກນີ້ຍັງໄດ້ມີການເຜີຍແຜ່ເອກະສານຈຳນວນໜຶ່ງກ່ຽວກັບລະບຽບການວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ກາໝາຍ, ຫຼຽນກາ, ທຸງໄຊ, ຕາປະທັບ ແລະ ເຄື່ອງແບບຂອງສະຫະພັນກຳມະບານລາວ ໃຫ້ບັນດາທ່ານທີ່ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຊື່ອມຊຶມກ່ຽວກັບວຽກງານຂອງອົງການຈັດຕັ້ງກຳມະບານ.

**# ຂ່າວ - ພາບ : ວັນປະເສີດ ສີມບູນຂັນ.**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ